USAID
FROM THE AMERICAN PEOPLE

WILDLIFE CONSERVATION SOCIETY

# ຜົນການຄົ້ນຄວ້າ

## ກ່ຽວກັບ ການເຊື່ອມໂຍງ ລະຫວ່າງການຄຸ້ມຄອງ ສັດປ່າ ແລະ ການບໍລິໂພກອາຫານ ໂດຍຄົວເຮືອນ ຢູ່ເຂດເນີນສູງຂອງ ສປປ ລາວ

### *ກໍລະນີສຶກສາຈາກເຂດປ່າສະຫງວນແຫ່ງຊາດ ນ້ຳແອດ-ພູເລີຍ*




*ບົດລາຍງານ ສ້າງໂດຍ Arlyne Johnson, Jutta Krahn ແລະ ແສງວິໄລ ແຊ່ເຕີ່ນ*

## *ພາກສະເໜີ*

ຊີວະນາໆພັນ ຈຳນວນສ່ວນຫລາຍທີ່ຍັງເຫລືອຢູ່ສາທາລະນະລັດປະຊາທິປະໄຕປະຊາຊົນລາວ (ຊຶ່ງຕໍ່ໄປນີ້ ເອີ້ນຫຍໍ້ ໃນເອກະສານນີ້ວ່າ ລາວ) ພົບເຫັນໄດ້ຢູ່ເຂດເນີນສູງທີ່ກັນດານ, ເຂດພູດອຍຊຶ່ງປົກຄຸມທັງໝົດເຂດພາກເໜືອ ກວມເອົາເນື້ອທີ່ໜຶ່ງສ່ວນສາມຂອງປະເທດ ແລະ ຍາວເລາະລຽບໄປຕາມເຂດຊາຍແດນເບື້ອງຕາເວັນອອກ ທີ່ຕິດກັບປະເທດຫວຽດນາມ. ເຖິງວ່າ ປະເທດຈະຍັງເປັນບ່ອນຢູ່ອາໄສຂອງສັດທີ່ອຸດົມສົມບູນແຫ່ງໜຶ່ງ ໂດຍມີຊະນິດພັນທີ່ຫລາກຫລາຍທີ່ສຳຄັນຕໍ່ການອະນຸລັກ ໃນລະດັບໂລກ, ແຕ່ຈຳນວນປະຊາກອນຂອງຫລາຍຊະນິດພັນເຫລົ່ານັ້ນແມ່ນຢູ່ໃນລະດັບຕ່ຳຢ່າງໜ້າເປັນຫ່ວງ ຍ້ອນສາຍເຫດຈາກການລ່າ ທີ່ບໍ່ມີລະບຽບການຄຸ້ມຄອງ ແລະ ການຄ້າເຖື່ອນສັດປ່າທີ່ດົນນານມາແລ້ວ. ໃນເຂດເນື້ອທີ່ດຽວກັນນີ້, ຄວາມທຸກຍາກ ແລະ ການຂາດໂພຊະນາການຢູ່ຕາມຊຸມຊົນທ້ອງຖິ່ນ ແລະ ກາລະໂອກາດທີ່ຈຳກັດ ສຳລັບການມີລາຍໄດ້, ການເຂົ້າເຖິງຂໍ້ມູນຂ່າວສານ ແລະ ການບໍລິການ ແມ່ນຍັງສືບຕໍ່ເປັນບັນຫາ. ຢູ່ໃນລະບົບການປູກຝັງແບບເຄື່ອນທີ່ແບບດັ້ງເດີມຂອງເຂດເນີນສູງຢູ່ສປປລາວ, ໃນເງື່ອນໄຂທີ່ຄວາມກົດດັນຂອງປະຊາກອນຕໍ່ເນື້ອທີ່ດິນຍັງຕ່ຳ, ການລ່າສັດແມ່ນອົງປະກອບໜຶ່ງ ທີ່ຂາດບໍ່ໄດ້ ຂອງວິຖີຊີວິດທ້ອງຖິ່ນ ແລະ ສັດປ່າ ແມ່ນອົງປະກອບທີ່ສຳຄັນຂອງການປຸງແຕ່ງອາຫານທ້ອງຖິ່ນ. ການສຶກສາຄົ້ນຄວ້າໃນຄັ້ງທີ່ຜ່ານໆມາ (Krahn  ແລະ Johnson 2007) ຊີ້ບອກວ່າການບໍລິໂພກສັດປ່າທີ່ຫລຸດລົງແມ່ນຜົນສືບເນື່ອງຢ່າງໜຶ່ງຂອງການລ່າສັດທີ່ຫລາຍເກີນຄວນ ແລະ ການຄ້າເຖື່ອນສັດປ່າ, ອາດເພີ່ມທະວີກາຍເປັນຄວາມສຳຄັນຢ່າງໜຶ່ງ, ແຕ່ຖືກມອງຂ້າມຢູ່ສະເໝີ, ເປັນຕົວແປຂອງຄາບອາຫານຂອງມະນຸດທີ່ບໍ່ດຸ່ນດ່ຽງ, ໂດຍສ່ວນໃຫຍ່ ແມ່ນພືດຜັກເປັນຫລັກທີ່ສັງເກດເຫັນໃນທ້ອງຖິ່ນ. ມັນເປັນໄປໄດ້ ຫລື ບໍ່ທີ່ວ່າການຄຸ້ມຄອງສັດປ່າທີ່ມີປະສິດທິພາບຫລາຍຂຶ້ນຈ່ອງຄືງທ່າແຮງທີ່ຍັງບໍ່ທັນບັນລຸໄດ້ໃນການຟື້ນຟູຄືນຈຳນວນປະຊາກອນສັດປ່າ ດັ່ງເຊັ່ນດຽວກັບ ການປັບປຸງ ວິຖີຊີວິດ ຢູ່ທ້ອງຖິ່ນ ແລະ ການຄ້ຳປະກັນສະບຽງອາຫານຂອງຄົວເຮືອນ ໃນບາງລະດັບ?

ເພື່ອຟື້ນຟູຄືນ ແລະ ອຳນວຍໃຫ້ຈຳນວນປະຊາກອນສັດປ່າຍືນຍົງໄດ້, ລັດຖະບານ ສປປ ລາວ ໃນປັດຈຸບັນ ກຳລັງຈັດຕັ້ງປະຕິບັດວິທີການຄຸ້ມຄອງສັດປ່າສອງຢ່າງ ຊຶ່ງພິສູດແລ້ວວ່າ ມີຜົນສຳເລັດ ເມື່ອນຳໃຊ້ຢູ່ແຫ່ງອື່ນໃນທົ່ວໂລກ: ການຈັດແບ່ງເປັນເຂດ ແລະ ການຈຳແນກຂາດໂຕລະຫວ່າງຊະນິດພັນທີ່ລ່າໄດ້ ແລະ ຫວງຫ້າມ. ກົດໝາຍວ່າດ້ວຍ ປ່າໄມ້ (ລັດຖະບານ ສປປ ລາວ, 2007ກ) ກຳນົດການສ້າງຕັ້ງເຂດສະຫງວນພາຍໃນພື້ນທີ່ຂອງເຂດປ່າສະຫງວນແຫ່ງຊາດໃຫ້ເປັນບ່ອນທີ່ເກືອດຫ້າມການລ່າສັດ, ໃນຂະນະທີ່ກົດໝາຍວ່າດ້ວຍສັດປ່າ ແລະ ສັດນ້ຳ (ລັດຖະບານ ສປປ ລາວ, 2007ຂ) ກຳນົດສັດປ່າເປັນສອງປະເພດ: *ປະເພດຫວງຫ້າມເດັດຂາດ* ແມ່ນບໍ່ສາມາດລ່າໄດ້ ຍ້ອນຕາມທຳມະຊາດແມ່ນຊະນິດຫາຍາກ ແລະ/ຫລື ແຜ່ພັນໄດ້ຊ້າ ແລະ *ປະເພດຄຸ້ມຄອງ* ທີ່ສາມາດລ່າໄດ້ໃນສະເພາະບາງລະດູການ ແລະ ດ້ວຍເຄື່ອງມືທີ່ເຈາະຈົງ. ເນື່ອງຈາກການຈັດຕັ້ງປະຕິບັດຂ້ອນຂ້າງໃໝ່ ສຳລັບກົດລະບຽບຄຸ້ມຄອງສັດປ່າເຫລົ່ານີ້ ຢູ່ ສປປ ລາວ ຈຶ່ງມີ ຫລັກຖານດ້ານປະລິມານທີ່ໜ້ອຍກ່ຽວກັບວ່າການເພີ່ມທະວີນຳໃຊ້ລະບຽບການດັ່ງກ່າວ ຈະກະ ທົບຄວາມຍືນຍົງຂອງການລ່າສັດປ່າ


© Jutta Krahn

ແລະ ໃນທາງກັບກັນ, ເປີດກາລະໂອກາດສຳລັບການປັບປຸງສະບຽງອາຫານຂອງຄົວເຮືອນ ແລະ ການໄດ້ຮັບສານອາຫານ. ເພາະສະນັ້ນ, ເປົ້າໝາຍຂອງກຳລະນີສຶກສາຄັ້ງນີ້ ແມ່ນເພື່ອທົດສອບ ແລະ ຂັດເກົາວິທີການສຳລັບການຊອກຮູ້ຂອດການເຊື່ອມໂຍງລະຫວ່າງ ການຄຸ້ມຄອງສັດປ່າ ແລະ ການບໍລິໂພກອາຫານ ໂດຍຄົວເຮືອນ, ອີງຕາມທິດທາງຫລັກໃນການຄົ້ນຫາ 4 ທິດ (ເບິ່ງຮູບ1). ວິທີການທີ່ຈຳແນກໄດ້ ແລະ ທົດສອບ ໃນກຳລະນີສຶກສາຄັ້ງນີ້ມາຮອດປັດຈຸບັນສາມາດນຳໄປປະຍຸກໃຊ້ຢູ່ບ້ານຕົວແທນເປັນວົງກວ້າງ ເພື່ອຕິດຕາມການປ່ຽນແປງໃນການເຊື່ອມໂຍງເຫລົ່ານີ້ ໃນຕໍ່ໜ້າ.

## *ເຂດພື້ນທີ່ສຶກສາ*

ໃນຂະນະທີ່ບັນດາຄຳຖາມຕ່າງໆທັງຫລາຍ ທີ່ສະຫລັບສັບຊ້ອນ ແລະ ກ່ຽວພັນກັບຫລາຍຂະແໜງການ ຊຶ່ງການສຶກສາຄັ້ງນີ້ເລີ່ມຕົ້ນສຳຫລວດແມ່ນສອດຄ່ອງກັບເຂດປ່າສະຫງວນທັງໝົດຂອງ ສປປ ລາວ. ກຳລະນີສຶກສາຄັ້ງນີ້ ແມ່ນດຳເນີນການຢູ່ເຂດປ່າສະຫງວນແຫ່ງຊາດນ້ຳແອດ-ພູເລີຍ ຊຶ່ງປົກຫຸ້ມເນື້ອທີ່ 5.950 ກມ2 ຊຶ່ງແມ່ນປ່າປະສົມຜັດປ່ຽນໃບເຂດຮ້ອນ ແລະ ປ່າດົງດິບ ຢູ່ພາກເໜືອຂອງ ສປປ ລາວ. ປະຊາກອນທີ່ອາໄສ ຢູ່ອ້ອມຮອບເຂດຫວງຫ້າມເດັດຂາດຂອງເຂດປ່າສະຫງວນແຫ່ງຊາດ ໃນໝູ່ບ້ານຈຳນວນ 98 ແຫ່ງ. ສ່ວນໃຫຍ່ແມ່ນກຸ່ມຊົນເຜົ່າ




**ຮູບ 1.** ແຜນວາດສະແດງເຖິງແຫລ່ງອາຫານທັງສາມແຫລ່ງ ສຳລັບການບໍລິໂພກໂດຍຄົວເຮືອນ, ລວມທັງອາຫານທີ່ເກັບເດັດຈາກທຳມະຊາດ, ອາຫານຊື້ເອົາ ແລະ ອາຫານທີ່ຜະລິດເອົາເອງໂດຍຄົວເຮືອນ. ແຜນວາດຍັງບົ່ງບອກເຖິງ 4 ຂົງເຂດທີ່ກວ້າງຂວາງຂອງການຊອກຮູ້ ຊຶ່ງກຳລະນີສຶກສາຄັ້ງນີ້ ໃຊ້ທົດສອບວິທີການເສາະຫາ:

- Q1. ການຄຸ້ມຄອງເຂດປ່າສະຫງວນ ແລະ ອົງການປົກຄອງບ້ານ ມີຜົນກະທົບຕໍ່ຄວາມອຸດົມສົມບູນ ແລະ ການນຳໃຊ້ສັດປ່າປະເພດຄຸ້ມຄອງລວມທັງຊີວະນາໆພັນອື່ນໆ ມີຄືແນວໃດ?
- Q2. ປະລິມານເກັບກູ້ມາຊົມໃຊ້ສັດປ່າ ປະເພດຄຸ້ມຄອງ ມີຄືແນວໃດ ແລະ ມັນມີຄວາມຍືນຍົງ ຫລື ບໍ່? ຖ້າຫາກ ບໍ່ຍືນຍົງ, ກົນໄກອັນໃດແດ່ທີ່ຕ້ອງການ ເພື່ອບັນເທົາຜົນກະທົບດ້ານຕ່າງໆຕໍ່ຊີວະນາໆພັນ?
- Q3. ຄວາມພໍພຽງຂອງໂພຊະນາການຂອງມະນຸດມີຄືແນວໃດ? ຖ້າຫາກບໍ່ພໍພຽງ, ກົນໄກອັນໃດທີ່ຕ້ອງການ ເພື່ອປັບປຸງໂພຊະນາການຂອງມະນຸດ?
- Q4. ບົດບາດຂອງຊີ້ນສັດປ່າໃນການບໍລິໂພກອາຫານໂດຍຄົວເຮືອນມີຄືແນວໃດ ໂດຍສົມທຽບ ລະຫວ່າງ ຊີ້ນສັດປ່າ ກັບ ຊີ້ນຈາກແຫລ່ງອື່ນໆ (ແລະ ພືດທົດແທນ), ເຊັ່ນທີ່ມາຈາກການຜະລິດເອົາເອງ ໃນຄົວເຮືອນ ຫລື ຊື້ຈາກຕະຫລາດເປັນຄືແນວໃດ?

ທີ່ບໍ່ແມ່ນກຸ່ມພາສາ ໄຕ - ກະໄດ. ເຂົາເຈົ້າດຳລົງຊີວິດແບບກຸ້ມຕົນເອງ ທີ່ກຳລັງປ່ຽນແປງຢ່າງໄວວາ ໂດຍມີການເຂົ້າເຖິງ ຫລື ເຊື່ອມໂຍງກັບເສດຖະກິດຕະຫລາດແຕ່ພຽງໜ້ອຍໜຶ່ງ. ການສຶກສາເບື້ອງຕົ້ນ ດັ່ງກ່າວນີ້ເລັ່ງດຳເນີນການຢູ່ບ້ານ ຫ້ວຍຕົມ, ຊຶ່ງມີ 39 ຄອບຄົວ ທີ່ເປັນບ້ານເຜົ່າ ອິວມ້ຽນ ຕັ້ງຢູ່ເມືອງ ວຽງທອງ, ຊຶ່ງລັດຖະບານ ໄດ້ຈຳແນກວ່າ ແມ່ນຫນຶ່ງໃນເມືອງທີ່ທຸກຍາກທີ່ສຸດຂອງປະເທດ.

## ວິທີການ

ຂໍ້ມູນຂ່າວສານຄວາມເປັນມາກ່ຽວກັບການລ່າສັດ ແລະ ການບໍລິໂພກອາຫານໂດຍຄົວເຮືອນ ຢູ່ໃນໝູ່ບ້ານອ້ອມແອ້ມເຂດປ່າສະຫງວນແຫ່ງຊາດ, ໄດ້ຮັບຈາກພະນັກງານລັດຂັ້ນທ້ອງຖິ່ນ, ຄະນະບໍລິຫານງານເຂດປ່າສະຫງວນແຫ່ງຊາດນ້ຳແອດ-ພູເລີຍ ແລະ ສີ່ກຸ່ມຊົນເຜົ່າໃນທ້ອງຖິ່ນໃນໄລຍະກອງປະຊຸມວິຊາການຈັດຂຶ້ນໃນເດືອນກຸມພາ 2009, ເປັນສິ່ງເຍືອງທາງໃນການອອກແບບວິທີການສຳຫລວດ. ຜູ້ເຂົ້າຮ່ວມຢືນຢັນວ່າອາຫານປ່າຈາກທຳມະຊາດຈຳນວນຫລາຍຊະນິດ ແມ່ນຖືກບໍລິໂພກອີງຕາມປະເພນີ, ຍ້ອນສາຍເຫດວ່າ ພວກມັນເຂົ້າເຖິງໄດ້ງ່າຍ ແລະ ບໍ່ເສຍຄ່າໃຊ້ຈ່າຍ. ອາຫານທຳມະຊາດຖືກເກັບກ່ຽວ ແລະ ປຸງແຕ່ງກິນຢູ່ໃນສາມຈຸດ: ຢູ່ພາຍໃນເຂດບ້ານ; ຢູ່ສະນຳ ເຄິ່ງຖາວອນ ຕັ້ງຢູ່ຕາມເນື້ອທີ່ຄັງລ້ຽງສັດ ແລະ ຢູ່ບ່ອນພັກແຮມຕາມປ່າດົງ. ເຂົາເຈົ້າລາຍງານເຖິງການຫລຸດຖອຍລົງຢ່າງຊັກໃຊ້ໃນຈຳນວນປະຊາກອນສັດປ່າ ໃນໄລຍະ 20 ປີ ຜ່ານມາ ໂດຍມີບາງຫລັກຖານບົ່ງບອກວ່າມີການຟື້ນຟູຄືນບາງລະດັບນັບຕັ້ງແຕ່ເລີ່ມຕົ້ນມີການບໍລິຫານຄຸ້ມຄອງປ່າສະຫງວນ ໃນປີ 2000.

ຈາກຂໍ້ມູນດັ່ງກ່າວນີ້, ເຄື່ອງມືການສຳຫລວດແບບຄຸນນະພາບ ແລະ ແບບມີສ່ວນຮ່ວມຫລາຍຢ່າງຖືກອອກແບບ ເພື່ອລວບລວມຂໍ້ມູນຂ່າວສານກ່ຽວກັບທ່າອ່ຽງໃນການບໍລິຫານຄຸ້ມຄອງສັດປ່າ ແລະ ການບໍລິໂພກອາຫານໂດຍຄົວເຮືອນ. ນັບແຕ່ເດືອນພຶດສະພາ ເຖິງ ເດືອນກໍລະກົດ 2009, ຜູ້ປະສານງານ ທີ່ຮຽນຈົບມະຫາວິທະຍາໄລປາກເວົ້າພາສາເຜົ່າ ມ້ຽນ ໄດ້ຢ່າງຄ່ອງແຄ້ວ ແລະ ຜູ້ຊ່ວຍພາກສະໜາມ (ຊາຍໜຶ່ງຄົນ ແລະ ຍິງໜຶ່ງຄົນ) ພັກຢູ່ນຳສອງຄອບຄົວ ເພື່ອທົດສອບເຄື່ອງມືສຳຫລວດແບບຄຸນນະພາບ ດັ່ງຕໍ່ໄປນີ້:

1. ***ແບບຟອມປະຫວັດຫຍໍ້ຄົວເຮືອນ.*** ເພື່ອເກັບກຳຂໍ້ມູນສະຖິຕິປະຊາກອນ ແລະ ເສດຖະກິດ-ສັງຄົມຂອງແຕ່ລະຄອບຄົວ, ຂໍ້ຫລັງນີ້ເປັນເໝືອນຕົວແບບໃຫ້ແກ່ຕົວຊີ້ບອກສຳລັບຖານະຂອງຄົວເຮືອນ.
2. ***ແບບຟອມການບັນທຶກນ້ຳໜັກອາຫານຂອງຄົວເຮືອນ.*** ເພື່ອສັງລວມການໄດ້ຮັບອາຫານທັງໝົດຕໍ່ຄອບຄົວຕໍ່ມື້ (ອີງຕາມການບັນທຶກທຸກໆຄາບອາຫານ ແລະ ຂອງກິນຫລິ້ນ).
3. ***ແບບຟອມກ່ຽວກັບສັດປ່າຂອງຄົວເຮືອນ.*** ເພື່ອສັງລວມການລ່າສັດປ່າທີ່ລ້ຽງລູກດ້ວຍນ້ຳນົມ, ນົກ ແລະ ສັດເລືອຄານຕໍ່ຄອບຄົວຕໍ່ມື້.
4. ***ແບບຟອມຂໍ້ມູນສັດປ່າເຂດບ້ານ.*** ເພື່ອນຳໃຊ້ ແລະ ໂອກາດຕິດຕາມປະລິມານສັດປ່າທີ່ລ່າມາຊົມໃຊ້ ຊຶ່ງເປັນສັດປ່າລ້ຽງລູກດ້ວຍນ້ຳນົມ, ນົກ ແລະ ສັດເລືອຄານ ໂດຍຄອບຄົວອື່ນໆພາຍໃນບ້ານ.
5. ***ແບບຟອມຂໍ້ມູນຈຸດເກັບກ່ຽວອາຫານໂດຍຄົວເຮືອນ.*** ເພື່ອກຳນົດຂະໜາດພື້ນທີ່ ເຊິ່ງແຕ່ລະຄອບຄົວເກັບກູ້ອາຫານທຳມະຊາດ/ພື້ນທີ່ດັກຈັບສັດປ່າ (ພື້ນທີ່ໂຕ່ງ).
6. ***ແບບຟອມຕິດຕາມການຂ້າສັດໂດຍຄົວເຮືອນ.*** ເພື່ອຕິດຕາມການຂ້າສັດລ້ຽງຕໍ່ຄົວເຮືອນຕໍ່ອາທິດ.
7. ***ແບບຟອມລາຍໄດ້ ແລະ ລາຍຈ່າຍຂອງຄົວເຮືອນ.*** ເພື່ອບັນທຶກຂໍ້ມູນລາຍຈ່າຍເຂົ້າໃນອາຫານ ແລະ ບໍ່ແມ່ນອາຫານປະຈຳອາທິດ ແລະ ເກັບກຳຂໍ້ມູນລາຍໄດ້ແຍກປະເພດ.

ການສຶກສາຕົວແບບຍັງລວມເອົາວິທີການແບບມີສ່ວນຮ່ວມເຂົ້ານຳເພື່ອປະເມີນປະເດັນ ດັ່ງຕໍ່ໄປນີ້:

1. ***ທ່າອ່ຽງໃນການບໍລິໂພກອາຫານ.*** ເພື່ອບັນທຶກຄວາມຮັບຮູ້ຂອງຊາວບ້ານຂອງການປ່ຽນແປງດ້ານການບໍລິໂພກ (ໝາຍເຖິງບໍລິມາດຂອງອາຫານ) ບັນດາອາຫານຕ່າງໆ ຕາມການເວລາ.
2. ***ທ່າອ່ຽງໃນແຫຼ່ງອາຫານ.*** ເພື່ອບັນທຶກຄວາມຮັບຮູ້ຂອງຊາວບ້ານຂອງສັດສ່ວນໃນການປ່ຽນແປງໃນແຫຼ່ງອາຫານ (ລ້ຽງເອງ, ທຳມະຊາດ, ຊື້) (ດັ່ງເຊັ່ນ: ຊີ້ນ, ຜັກ, ໝາກໄມ້, ເຂົ້າ) ຕາມການເວລາ.
3. ***ທ່າອ່ຽງໃນຄວາມອຸດົມສົມບູນ ແລະ ປະລິມານການລ່າສັດປ່າ.*** ເພື່ອລວບລວມຄວາມຮັບຮູ້ຂອງຊາວບ້ານ ຂອງການປ່ຽນແປງ ທີ່ກ່ຽວພັນກັບຄວາມອຸດົມ ແລະ ປະລິມານການລ່າສັດປ່າຕາມການເວລາ.
4. ***ທ່າອ່ຽງຂອງການຄຸ້ມຄອງປະລິມານການສັດປ່າ.*** ເພື່ອບັນທຶກຄວາມຮັບຮູ້ຂອງຊາວບ້ານຕໍ່ການປ່ຽນແປງ ໃນຄົວເຮືອນ ແລະ ກ່ຽວກັບກົດລະບຽບຄຸ້ມຄອງສັດປ່າຂອງບ້ານຕາມການເວລາ
5. ***ຄວາມຮັບຮູ້ເຂົ້າໃຈຕໍ່ຄຸນຄ່າດ້ານໂພຊະນາການ.*** ເພື່ອບັນທຶກຄວາມຮັບຮູ້ຂອງຊາວບ້ານຕໍ່ຄຸນຄ່າດ້ານໂພຊະນາການຂອງຊະນິດອາຫານຕ່າງໆ, ໂດຍສະເພາະລະຫວ່າງອາຫານຈາກທຳມະຊາດ ແລະ ອາຫານທີ່ມີຜະລິດເອງ.
6. ***ຄວາມມັກດ້ານລົດຊາດ.*** ເພື່ອລວບລວມຄວາມມັກດ້ານລົດຊາດຊະນິດອາຫານຕ່າງໆຂອງຊາວບ້ານ; ໂດຍສະເພາະຄວາມແຕກຕ່າງຂອງຄວາມມັກ ລະຫວ່າງອາຫານຈາກທຳມະຊາດ ແລະ ທີ່ຜະລິດເອົາເອງ.

## ຜົນໄດ້ຮັບ

ໂດຍລວມ, ທີມງານສຶກສາ ສາມາດນຳໃຊ້ວິທີການທີ່ພັດທະນາຂຶ້ນຢ່າງມີປະສິດທິພາບ ເພື່ອເກັບກຳຂໍ້ມູນທີ່ຕ້ອງການເພື່ອສາມາດຕອບຄຳຖາມທີ່ຕັ້ງໄວ້, ເຖິງວ່າ ຈະມີການແນະນຳໃຫ້ ດັດປັບໃນບາງຈຸດ ສຳລັບໃຊ້ໃນການສຶກສາຄັ້ງຕໍ່ໄປ. ຂໍ້ມູນໄດ້ຈາກແບບຟອມກ່ຽວກັບສັດປ່າຂອງຄົວເຮືອນ ແລະ ແບບຟອມຂໍ້ມູນສັດປ່າເຂດບ້ານ ອຳນວຍໃຫ້ສາມາດຈຳແນກໄດ້ສັດປ່ານັບແຕ່ລະໂຕຈົນເຖິງສາຍພັນ ແລະ ໃນຫລາຍກໍລະນີຍັງຈຳແນກຊະນິດ, ດັ່ງດຽວກັບການກຳນົດກຸ່ມອາຍຸ ແລະ ເພດຂອງສັດນຳອີກ. ແບບຟອມຂໍ້ມູນຈຸດເກັບກ່ຽວອາຫານໂດຍຄົວເຮືອນ ພິສູດໄດ້ວ່າເປັນການພຽງພໍ ສຳລັບການສ້າງ ແຜນທີ່ ຈຸດເກັບກ່ຽວ ແລະ ບ່ອນຢູ່ອາໄສ, ຂໍ້ມູນຊຶ່ງຖືກນຳໃຊ້ເພື່ອປະເມີນກ່ຽວກັບ “ເຂດພື້ນທີ່ໂຕ່ງ” ບ່ອນທີ່ສັດປ່າຖືກລ່າ. ເມື່ອລວມກັນເຂົ້າ, ແບບຟອມເຫລົ່ານີ້ ສະໜອງຂໍ້ມູນພື້ນຖານທີ່ຕ້ອງການເພື່ອປະເມີນປະລິມານການລ່າຕໍ່ປີສັດຊະນິດຕ່າງໆຕໍ່ເນື້ອທີ່ກິໂລແມັດມົນທົນ, ເຖິງວ່າ ມັນຈະເປັນສິ່ງຈຳເປັນເພື່ອນຳໃຊ້ວິທີການເຫລົ່ານີ້ ຕະຫລອດໄລຍະເວລາໜຶ່ງປີເປັນຢ່າງນ້ອຍ ເພື່ອຮັບປະກັນການປະເມີນກ່ຽວກັບປະລິມານການລ່າສັດປ່າທັງໝົດຢ່າງຊັດເຈນທົ່ວທັງລະດູການຕ່າງໆ ຊຶ່ງມີລະດັບການລ່າສັດທີ່ເຂັ້ມຂຸ້ນແຕກຕ່າງກັນ.

ຂໍ້ມູນປະລິມານການລ່າສັດປ່າ ທີ່ຜິດກົດໝາຍແມ່ນຈຳເປັນສຳລັບການປະເມີນປະລິມານການລ່າສັດປ່າທັງໝົດ. ໃນຂະນະທີ່ຂໍ້ມູນເຊັ່ນນັ້ນ ແມ່ນບໍ່ສາມາດໄດ້ຮັບຢ່າງງ່າຍດາຍ, ການຍາດກາລະໂອກາດ ສັງເກດເຫັນໄດ້ຈາກແບບຟອມຂໍ້ມູນສັດປ່າເຂດບ້ານນັ້ນ ອາດເປັນປະໂຫຍດ ໃນການທຳຄວາມເຂົ້າໃຈກໍລະນີທີ່ເກີດຂຶ້ນ ແລະ ຄວາມຖີ່ຂອງປະລິມານສັດປ່າທີ່ຖືກລ່າ.ກ່ອນທີ່ຈະມີການຈັດຕັ້ງປະຕິບັດ ກໍລະນີສຶກສາຄັ້ງນີ້ ນຳຄົວເຮືອນ ແລະ ບ້ານຈຳນວນຫລາຍ, ການສຶກສາທີ່ເລັງເປົ້າໝາຍເພື່ອເພີ່ມທະວີຄວາມຮູ້ກ່ຽວກັບກົດລະບຽບການຄຸ້ມຄອງສັດປ່າ ໃຫ້ແກ່ຊຸມຊົນທ້ອງຖິ່ນ ແລະ ສະໜອງຂໍ້ມູນຂ່າວສານຄວາມເປັນມາກ່ຽວກັບໂພຊະນາການຂອງມະນຸດ ແລະ ຈຸດປະສົງຂອງການຄົ້ນຄວ້າຄັ້ງນີ້ (ເລັງທ່າແຮງໃສ່ກຸ່ມແມ່ຍິງ), ທັງໝົດນີ້ອາດຊ່ວຍຜ່ອນຄາຍຄວາມກັງວົນກ່ຽວກັບການລາຍງານການລ່າສັດປ່າ.

ຂໍ້ມູນທີ່ໄດ້ຈາກແບບຟອມການບັນທຶກນໍ້າໜັກອາຫານຂອງຄົວເຮືອນເປັນເຄື່ອງມື ທຳຄວາມເຂົ້າໃຈຄວາມພໍພຽງ ດ້ານສະບຽງອາຫານຂອງແຕ່ລະຄົວເຮືອນ ແລະ ການໄດ້ຮັບສານອາຫານ ລວມທັງບົດບາດຂອງອາຫານປ່າຈາກທຳມະຊາດທຽບໃສ່ອາຫານຈາກແຫລ່ງອື່ນໆ, ເຖິງວ່າມັນຈະຮຽກຮ້ອງໃຫ້ມີການກຳກັບດູແລແບບສຸມ ແລະ ຊຳນານການ ເພື່ອບໍລິຫານຄຸ້ມຄອງ. ການວິເຄາະຜົນໄດ້ຮັບບົ່ງບອກວ່າ ຂໍ້ມູນແມ່ນພຽງພໍເພື່ອຕອບຄຳຖາມເຫລົ່ານີ້ ສາມາດມີຄວາມເປັນໄປໄດ້ທີ່ຈະໄດ້ຮັບດ້ວຍວິທີການເກັບກຳການຊັ່ງນໍ້າໜັກອາຫານທັງໝົດສະເພາະແຕ່ໃນໄລຍະໜຶ່ງ ອາທິດຕໍ່ເດືອນ, ໃນຂະນະທີ່ສືບຕໍ່ການຊັ່ງນໍ້າໜັກຂອງຊີ້ນ, ທາດໂປຼຕີນຈາກພືດທົດແທນ ແລະ ໄຂ່ໃນແຕ່ລະມື້. ຂໍ້ມູນທີ່ພຽງພໍກ່ຽວກັບລາຍໄດ້ ແລະ ລາຍຈ່າຍຂອງຄົວເຮືອນ, ຖືກນຳໃຊ້ ເພື່ອໃຫ້ສາມາດເຂົ້າໃຈໄດ້ດີຂຶ້ນກ່ຽວກັບແຫລ່ງຂອງລາຍໄດ້ເປັນເງິນ ແລະ ການຊື້ຊີ້ນ/ສິ່ງທົດແທນຊີ້ນ, ສາມາດເປັນໄປໄດ້ ອາດຖືກເກັບກຳໂດຍນຳໃຊ້ວິທີການທວນຄືນ ໄລຍະໜຶ່ງອາທິດ ຫລືຜົນຂະຫຍາຍມາຈາກຊຸດຂໍ້ມູນຂອງທາງການ, ແທນທີ່ຈະໃຊ້ວິທີເກັບກຳເປັນປະຈຳໃນແຕ່ລະມື້.

ຄາບອາຫານທັງໝົດ 549 ຄາບ ໄດ້ຮັບການບັນທຶກ ລະຫວ່າງເດືອນພຶດສະພາເຖິງເດືອນສິງຫາ ຮ່ວມ 2 ຄອບຄົວ. ຜົນໄດ້ຮັບຊີ້ບອກວ່າ ການໄດ້ຮັບອາຫານ ແລະສານອາຫານ ແມ່ນຕໍ່າກວ່າທີ່ຄວນ ແລະອັດຕາສັດສ່ວນຂອງໝວດອາຫານແມ່ນບໍ່ດຸ່ນດ່ຽງ. ຄາບອາຫານ ແມ່ນເພິ່ງພາໃສ່ເຂົ້າເປັນຫລັກ, ປະລິມານພະລັງງານຕໍ່າ ກໍຄືໄຂມັນ ລວມທັງພືດຜັກເປັນຕົ້ນຕໍ. ປະລິມານຊີ້ນຫລາຍກວ່າ ສອງສ່ວນສາມ (67%) ແລະ ຈຳນວນເກືອບເຄິ່ງໜຶ່ງ ແມ່ນເກັບເດັດມາຈາກທຳມະຊາດ. ບໍລິມາດສັດປ່າທັງໝົດທີ່ລ່າໄດ້ ຕາມການລາຍງານ ໂດຍສອງຄອບຄົວໃນໄລຍະເວລາສາມເດືອນ ສ່ວນໃຫຍ່ (61%) ແມ່ນ ມາຈາກສັດລ້ຽງລູກດ້ວຍນໍ້ານົມຂະໜາດນ້ອຍ (ຂະໜາດ <1 ກິໂລ), ຕິດຕາມມາດ້ວຍ ປາ (30.2%). ໂດຍລວມ, ທັງສອງຄອບຄົວ ຖືກພົບວ່າ ມີລະດັບລາຍໄດ້ ແລະ ລາຍຈ່າຍທີ່ຕໍ່າລວມທັງຄວາມຫລາກຫລາຍ ພ້ອມທັງມີການເອື່ອຍອີງຢ່າງໜັກຕໍ່ຊັບພະຍາກອນທຳມະຊາດ ໃນຫລາຍດ້ານຂອງວິຖີຊີວິດຂອງເຂົາເຈົ້າ.

ຄວາມແຕກຕ່າງລະຫວ່າງ ຜົນໄດ້ຮັບລວບລວມຈາກການບັນທຶກຂໍ້ມູນຄົວເຮືອນແບບປະລິມານ ແລະ ບັນດາຂໍ້ມູນທີ່ໄດ້ຮັບໂດຍການນຳໃຊ້ວິທີການແບບມີສ່ວນຮ່ວມ, ເພາະສະນັ້ນ ຈຶ່ງຖືວ່າເປັນອັດຕະວິໄສ, ເນັ້ນໜັກຄວາມຈຳເປັນຂອງການເກັບກຳຂໍ້ມູນແບບປະລິມານ ເພື່ອສາມາດຕອບຄຳຖາມຂອງການສຶກສາຄົ້ນຄວ້າ ໄດ້ຢ່າງເຕັມປ່ຽມ, ຍ້ອນວ່າ ໃນບາງກໍລະນີ ມີການລາຍງານຄວາມຮັບຮູ້ຄວາມເຂົ້າໃຈຂອງຊາວບ້ານ ແມ່ນແຕກຕ່າງຢ່າງຊັດເຈນຈາກຂໍ້ມູນແບບຄຸນະພາບທີ່ໄດ້ບັນທຶກເກັບກຳໄວ້ນັ້ນ.

## *ພາກສະຫລຸບ*

ຜົນທີ່ໄດ້ຈາກກໍລະນີສຶກສາ ດັ່ງກ່າວນີ້ ຊີ້ບອກວ່າ ສັດປ່າ ແມ່ນອີງປະກອບພື້ນຖານຂອງການບໍລິໂພກອາຫານ ໂດຍຄົວເຮືອນໃນເຂດເນີນສູງ. ເພາະສະນັ້ນ, ການຄຸ້ມຄອງສັດປ່າ ເພື່ອສາມາດນຳໃຊ້ຢ່າງຍືນຍົງເປັນສິ່ງທີ່ສຳຄັນ ບໍ່ພຽງແຕ່ສຳລັບພາກສ່ວນຄຸ້ມຄອງຊັບພະຍາກອນທຳມະຊາດໃນການອະນຸລັກຊີວະນາໆພັນເທົ່ານັ້ນ, ແຕ່ຍັງອາດແມ່ນ ສິ່ງກະທົບທີ່ມີພະລັງຕໍ່ການປ້ອງກັນການຂາດສານອາຫານ ແລະ ການຫຼຸດຜ່ອນຄວາມທຸກຍາກຢູ່ໃນເຂດຫ່າງໄກສອກຫຼີກໃນໄລຍະເວລາ. ຜົນທີ່ນຳສະເໜີຢູ່ໃນບົດລາຍງານສະບັບນີ້ ເນັ້ນຄວາມສຳຄັນຂອງການສຳຫຼວດຕື່ມອີກ ໃນຕໍ່ໜ້າກ່ຽວກັບ ການເຊື່ອມໂຍງລະຫວ່າງການບໍລິໂພກອາຫານໂດຍຄົວເຮືອນ ແລະ ການຄຸ້ມຄອງສັດປ່າໃນທົ່ວຂົງເຂດທີ່ກວ້າງຂວາງຂອງບ້ານ ທີ່ມີກຸ່ມຊົນເຜົ່າທີ່ຫລາກຫລາຍ. ຂໍ້ມູນຂ່າວສານທີ່ໄດ້ຈາກການສຶກສາ ດັ່ງກ່າວນີ້ ເປັນສິ່ງຈຳເປັນຕໍ່ການນຳເອົາບັນດາຜູ້ມີສ່ວນກ່ຽວຂ້ອງຈາກຂະແໜງການພັດທະນາຊົນນະບົດ ເຂົ້າມາມີສ່ວນໃນວິທີການແບບລວມສູນ ເພື່ອແກ້ໄຂການບໍ່ພໍພຽງໃນຄາບອາຫານຂອງຊາວບ້ານ ໃນຂະນະດຽວກັນ ເພື່ອຄຸ້ມຄອງພູມສັນຖານ ສຳລັບການອະນຸລັກສັດປ່າ ແລະ ການລ່າທີ່ຮັບປະກັນຄວາມຍືນຍົງ. ຖ້າຫາກປະປ່ອຍບໍ່ແກ້ໄຂ, ຄາບອາຫານທີ່ມີແຕ່ຜັກ ທີ່ຫລາຍຂຶ້ນຊັກໃຊ້, ຄວາມຮູ້ຄວາມເຂົ້າໃຈດ້ານໂພຊະນາການທີ່ຕໍ່າ ແລະ ການຂາດແຄນກາລະໂອກາດເຂົ້າເຖິງແຫລ່ງຊີ້ນ (ແລະ ທາດໂປຼຕີນ ທົດແທນໄດ້ຈາກ ພືດ), ສົມທົບກັບກາລະໂອກາດທີ່ຈຳກັດການມີລາຍໄດ້ຖືກຕ້ອງຕາມກົດໝາຍ, ແນ່ນອນວ່າຈະກີດຂວາງການຍອມຮັບ ແລະ ການຈັດຕັ້ງປະຕິບັດລະບຽບການຄຸ້ມຄອງສັດປ່າຢ່າງມີປະສິດທິພາບໃນໄລຍະຍາວ. ຄຳຖາມທີ່ນຳໃຊ້ ແລະ ວິທີການທີ່ສືບເນື່ອງ, ອາດຍັງພິສູດວ່າກ່ຽວພັນກັບອຸດສາຫະກຳຂຸດຄົ້ນຊັບພະຍາກອນທຳມະຊາດຢູ່ໃນເຂດຊົນນະບົດຂອງ ສປປ ລາວ ເຊັ່ນດຽວກັນ, ຊຶ່ງມີຈຳນວນເພີ່ມທະວີການລົງທຶນໃນຂົງເຂດ ພະລັງງານນໍ້າຕົກ, ຂຸດຄົ້ນແຮ່ທາດ, ສວນປູກກະສິກຳຂະໜາດໃຫຍ່ ແລະ ບັນ ດາໂຄງການກໍ່ສ້າງໂຄງລ່າງນັ້ນສ້າງຄວາມຈຳເປັນໃຫ້ແກ່ການປະເມີນ ຢ່າງແທດເໝາະທາງສັງຄົມ ແລະ ສິ່ງແວດລ້ອມວ່າມີຜົນກະທົບກະເທືອນ ຕໍ່ຊັບພະຍາກອນທຳມະຊາດ ບໍ່ພຽງແຕ່ດ້ານຊີວະນາໆພັນເທົ່ານັ້ນ, ແຕ່ຍັງສິ່ງຜົນກະທົບຕໍ່ວິຖີຊີວິດຂອງມະນຸດ ກໍຄືຄວາມຢູ່ກິນດີດ້ານໂພຊະນາການອີກຕື່ມ.

## *ເອກະສານອ້າງອີງ*


ລັດຖະບານ ສປປ ລາວ. 2007ກ. *ກົດໝາຍວ່າດ້ວຍ ປ່າໄມ້ ເລກທີ 6/ ສພຊ.* ລົງວັນທີ 24 ທັນວາ 2007. ນະຄອນຫລວງວຽງຈັນ, ສະພາແຫ່ງຊາດ.

ລັດຖະບານ ສປປ ລາວ. 2007ຂ. *ກົດໝາຍວ່າດ້ວຍ ສັດນໍ້າ ແລະ ສັດປ່າ ເລກທີ 07/ ສພຊ.* ລົງວັນທີ 24 ທັນວາ 2007. ນະຄອນຫລວງວຽງຈັນ, ສະພາແຫ່ງຊາດ.

Krahn, J. ແລະ  A. Johnson. 2007. *ການຄໍ້າປະກັນສະບຽງອາຫານ ແລະ ການຄຸ້ມຄອງສັດປ່າ.* ວາລະສານ ຈຸດປະກາຍເສະບັບທີ  9: ໜ້າ1733.



***ທ່ານສາມາດ ຊອກຮູ້ອີກຕື່ມ*** *ກ່ຽວກັບການສຳຫລວດເບື້ອງຕົ້ນຂອງທ່າແຮງໃນວິທີການ ດັ່ງກ່າວນີ້ ສຳລັບການສຶກສາ ການເຊື່ອມໂຍງລະຫວ່າງການຄຸ້ມຄອງສັດປ່າ, ການບໍລິໂພກອາຫານໂດຍຄົວເຮືອນ ແລະ ໂພຊະນາການຂອງມະນຸດ, ກະລຸນາອ່ານບົດລາຍງານ ສະບັບສົມບູນ ທີ່ມີສະໜອງໃຫ້ທ່ານ ໂດຍທິວໜ້າົມງານຜູ້ແຕ່ງ ຕາມທີ່ຢູ່ ດັ່ງຕໍ່ໄປນີ້ (ajohnson@wcs.org).*



*ບົດລາຍງານສະບັບນີ້ ມີໂອກາດພິມເຜີຍແຜ່ຄັ້ງນີ້ ກໍຍ້ອນການສະໜັບສະໜູນ ແລະ ເອື້ອເຟື້ອ ໂດຍປະຊາຊົນ ສະຫະລັດ ອາເມລິກາ ຜ່ານອົງການ ຊ່ວຍເຫລືອດ້ານການພັດທະນາສາກົນຂອງ ສະຫະລັດ ອາເມລິກາ (USAID) ພາຍໃຕ້ຂໍ້ກຳນົດອີງຕາມສັນຍາຮ່ວມມື ເລກທີ No. EPPA00060001400. ເນື້ອໃນບົດລາຍງານສະບັບນີ້ ແມ່ນຄວາມຮັບຜິດຊອບຂອງຜູ້ແຕ່ງ ແລະ ບໍ່ໝາຍຄວາມວ່າ ຈະສ່ອງແສງທັດສະນະຂອງອົງການ USAID  ຫລື ລັດຖະບານ ສະຫະລັດ ອາເມລິກາ ແຕ່ປະການໃດ.*